

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ....................................01 - 04

**II.** ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ**................................**05 - 06

**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ**...............................................**07 - 14


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນຕຸລາ **2025**


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 06-08 ຕຸລາ 2025, ພັກກອມມູນິດຫວຽດນາມ ໄດ້ດຳເນີນ ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 13 ສະໄໝທີ XIII ທີ່ນະຄອນຫຼວງຮ່າໂນ້ຍ, ໂດຍການເຂົ້າຮ່ວມຂອງສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ. ກອງປະຊຸມໄດ້ປຶກສາຫາລື ແລະ ປະກອບຄຳເຫັນຕໍ່ຫຼາຍບັນຫາສຳຄັນ ເປັນຕົ້ນ: ຮ່າງບົດລາຍງານການເມືອງ; ຮ່າງບົດສະຫຼຸບລາຍງານບາງບັນຫາທິດສະດີ ແລະ ພຶດຕິກຳຕົວຈິງ ກ່ຽວກັບພາລະກິດປ່ຽນແປງໃໝ່ຕາມທິດສັງຄົມນິຍົມ ໃນໄລຍະ 40 ຜ່ານມາ; ຮ່າງບົດສະຫຼຸບລາຍງານ 15 ປີ ການຈັດຕັ້ງປະຕິບັດກົດລະບຽບພັກ; ແນະນຳກ່ຽວກັບບຸກຄະລາກອນ ຄະນະບໍລິຫານງານສູນກາງພັກ ສະໄໝທີ XIV; ບຸກຄະລາກອນ ຄະນະກຳມະການກວດກາສູນກາງພັກ ສະໄໝທີ XIV; ກຳນົດວັນເວລາ, ເນື້ອໃນ, ລະບົບການເຮັດວຽກ, ການປ່ອນບັດເລືອກຕັ້ງ ແລະ ແຜນວາລະ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 14 ຂອງພັກ; ບົດລາຍງານ ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2025 ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ປີ 2026; ບົດລາຍງານການຕີລາຄາການຈັດຕັ້ງປະຕິບັດ ງົບປະມານແຫ່ງລັດ ປີ 2025, ແຜນງົບປະມານລັດປະຈຳ ປີ 2026 ແລະ ແຜນງົບປະມານແຫ່ງຊາດ 03 ປີ ໄລຍະ 2026-2028; ແຜນການເງິນແຫ່ງຊາດ 05 ປີ ໄລຍະ 2026-2030; ວຽກງານພະນັກງານ; ບົດລາຍງານບັນດາວຽກງານສຳຄັນທີ່ ກົມການເມືອງສູນກາງພັກ ໄດ້ດຳເນີນການແກ້ໄຂນັບຕັ້ງແຕ່ ກອງປະຊຸມຄົບຄະນະ ຄັ້ງທີ 12 ມາເຖິງກອງປະຊຸມຄົບຄະນະ ຄັ້ງທີ 13 ແລະ ຄາດຄະເນບາງວຽກງານຈຸດສຸມ ແຕ່ນີ້ຫາກອງປະຊຸມຄົບຄະນະ ຄັ້ງທີ 14.

#### 2) ພັກກອມມູນິດຈີນ

ວັນທີ 13 ຕຸລາ 2025, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ, ປະທານຄະນະກຳມະການການທະຫານສູນກາງຈີນ ໄດ້ເຂົ້າຮ່ວມກອງປະຊຸມສຸດຍອດແມ່ຍິງໂລກ ຢູ່ສູນປະຊຸມແຫ່ງຊາດ, ນະຄອນຫຼວງປັກກິ່ງ ພາຍໃຕ້ຫົວຂໍ້: "ເສີມຂະຫຍາຍຈິດໃຈ ກອງປະຊຸມໃຫຍ່ແມ່ຍິງໂລກປັກກິ່ງ ເລັ່ງລັດຂະບວນການໃໝ່ແຫ່ງການພັດທະນາແມ່ຍິງຢ່າງຮອບດ້ານ". ສະຫາຍ ສີ ຈິ້ນຜິງ ໄດ້ກ່າວຄຳປາໄສມີບາງຕອນວ່າ: ເມື່ອແນມເບິ່ງອະນາຄົດ, ຕ່າງຝ່າຍຄວນທົບທວນຄືນຈິດໃຈ ກອງປະຊຸມໃຫຍ່ແມ່ຍິງໂລກ, ເຕົ້າໂຮມຄວາມຮັບຮູ້ທີ່ເປັນເອກະພາບກັນ ໃຫ້ກວ້າງຂວາງກວ່າເກົ່າ, ບຸກເບີກເສັ້ນທາງໃຫ້ກວ້າງຂວາງກວ່າເກົ່າ ແລະ ໃຊ້ການເຄື່ອນໄຫວທີ່ແທດເໝາະຕົວຈິງກວ່າເກົ່າ ເພື່ອເລັ່ງລັດຂະບວນການໃໝ່ແຫ່ງການພັດທະນາແມ່ຍິງຢ່າງຮອບດ້ານ. ນອກຈາກນັ້ນ, ສະຫາຍ ສີ ຈິ້ນຜິງ ຍັງໄດ້ສະເໜີ 04 ຂໍ້ສຳຄັນຄື: 1) ຮ່ວມກັນສ້າງສະພາບແວດລ້ອມອັນດີງາມ ທີ່ມີຜົນປະໂຫຍດຕໍ່ການພັດທະນາ ແລະ ເຕີບໃຫຍ່ຂອງແມ່ຍິງ; 2) ຮ່ວມກັນບົ່ມເພາະພະລັງແຮງທີ່ເຂັ້ມແຂງ ໃນການຊຸກຍູ້ການພັດທະນາທີ່ມີຄຸນນະພາບສູງດ້ານວຽກງານແມ່ຍິງ; 3) ຮ່ວມກັນສ້າງສະພາບການປົກຄອງເພື່ອຮັບປະກັນສິດ ແລະ ຜົນປະໂຫຍດຂອງແມ່ຍິງ; 4) ຮ່ວມກັນຂຽນປະຫວັດສາດໜ້າໃໝ່ແຫ່ງການຊຸກຍູ້ ການຮ່ວມມືຂອງແມ່ຍິງໃນໂລກ.

#### 3) ພັກແຮງງານເກົາຫຼີ

ວັນທີ 10 ກັນຍາ 2025, ພັກແຮງງານເກົາຫຼີ ໄດ້ຈັດພິທີສະເຫຼີມສະຫຼອງວັນສ້າງຕັ້ງພັກ ຄົບຮອບ 80 ປີ ທີ່ນະຄອນຫຼວງພຽງຢາງ ໂດຍມີປະມຸກລັດ, ການນຳຂັ້ນສູງ ຂອງບັນດາປະເທດເພື່ອນມິດ ເຂົ້າຮ່ວມ. ຕະຫຼອດໄລຍະ 80 ປີ ພາຍໃຕ້ການນຳພາຂອງພັກແຮງງານເກົາຫຼີ, ປະເທດ ແລະ ປະຊາຊົນ ສາມາດຍາດໄດ້ຜົນງານອັນໃຫຍ່ຫຼວງຮອບດ້ານ, ຮັກສາໝາກຜົນການປະຕິວັດ,ການເມືອງມີສະຖຽນລະພາບໜັກແໜ້ນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ເສດຖະກິດໄດ້ຮັບການພັດທະນາຢ່າງໝັ້ນທ່ຽງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການຍົກລະດັບຂຶ້ນເທື່ອລະກ້າວ ບົນພື້ນຖານແນວຄິດຈູເຊ ທີ່ຍິ່ງໃຫຍ່ນັ້ນ ພັກແຮງງານເກົາຫຼີ ສືບຕໍ່ຍາດຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ. ໃນພິທີ, ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ພັກແຮງການເກົາຫຼີ, ປະທານກິດຈະການແຫ່ງລັດ ສປປ ເກົາຫຼີ ໄດ້ກ່າວສະແດງຄວາມຍິນດີ ແລະ ຊົມເຊີຍ ການເຄື່ອນໄຫວຂອງພັກແຮງງານເກົາຫຼີ ໄລຍະ 80 ປີ ຜ່ານມາ ແລະ ໄດ້ກ່າວວ່າ ພາຍໃຕ້ການນຳພາຂອງພັກແຮງງານເກົາຫຼີ ບໍ່ເຄີຍມີຂໍ້ຜິດພາດ ແລະ ພັກໄດ້ນຳພາປະເທດໄປສູ່ຫົນທາງແຫ່ງຄວາມຈະເລີນຮຸ່ງເຮືອງ ດ້ວຍສະຕິປັນຍາ ແລະ ກຳລັງແຮງຂອງປະຊາຊົນ. ພ້ອມດຽວກັນນີ້, ໃນລະຫວ່າງວັນທີ 07-08 ຕຸລາ 2025, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ໄດ້ຢ້ຽມຢາມລັດຖະກິດ ຢູ່ ສປປ ເກົາຫຼີ ເພື່ອສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ

ແລະ ການຮ່ວມມືທີ່ເປັນມູນເຊື້ອ ມາແຕ່ດົນນານ ລະຫວ່າງ ລາວ ແລະ ສປປ ເກົາຫຼີ ໃຫ້ນັບມື້ນັບແໜ້ນແຟ້ນ; ຊົມເຊີຍວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 80 ປີ, ພ້ອມທັງເປັນການສະເຫຼີມສະຫຼອງ ສາຍພົວພັນທາງການທູດ ລະຫວ່າງ ສປປ ລາວ ແລະ ສປປ ເກົາຫຼີ ຄົບຮອບ 50 ປີ. ນອກນັ້ນ, ໃນລະຫວ່າງວັນທີ 09-10 ຕຸລາ 2025, ສະຫາຍ ໂຕ ເລີມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ຢ້ຽມຢາມ ສປປ ເກົາຫຼີ ຢ່າງເປັນທາງການ ແລະ ເຂົ້າຮ່ວມພິທີສະເຫຼີມສະຫຼອງດັ່ງກ່າວ ຊຶ່ງສະແດງໃຫ້ເຫັນເຖິງສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອ ມາແຕ່ດົນນານ ລະຫວ່າງ ສສ ຫວຽດນາມ ແລະ ສປປ ເກົາຫຼີ ພ້ອມທັງເປັນການສະເຫຼີມສະຫຼອງສາຍພົວພັນທາງການທູດ ລະຫວ່າງ ສສ ຫວຽດນາມ ແລະ ສປປ ເກົາຫຼີ ຄົບຮອບ 75 ປີ. ສ່ວນ ສປ ຈີນ ໄດ້ແຕ່ງຕັ້ງໃຫ້ ສະຫາຍ ຫຼີ ສຽງ, ນາຍົກລັດຖະມົນຕີ ເຂົ້າຮ່ວມພິທີດັ່ງກ່າວ.

**4) ພັກກອມມູນິດກູບາ**

ວັນທີ 15-17 ຕຸລາ 2025, ທີ່ນະຄອນຫຼວງລາຮາວານ, ພັກກອມມູນິດກູບາ ໄດ້ເປັນເຈົ້າພາບຈັດກອງປະຊຸມເວທີພົບປະສາກົນຄັ້ງທີ III ຂອງບັນດາພັກການເມືອງຝ່າຍຊ້າຍ, ໂດຍການເຂົ້າຮ່ວມຂອງ ສະຫາຍ Miguel Díaz-Canel Bermúdez, ເລຂາທິການທີ່ໜຶ່ງ ຄະນະບໍລິຫານງານສູນກາງພັກ ມີຄະນະຜູ້ແທນເຂົ້າຮ່ວມຫຼາຍກວ່າ 120 ຄົນ ຈາກ 30 ປະເທດ ໃນນັ້ນມີ 35 ພັກການເມືອງຝ່າຍຊ້າຍ ແລະ ຂະບວນກ້າວໜ້າ ເປັນຕົ້ນແມ່ນ ຕົວແທນຈາກພັກກອມມູນິດຈີນ, ຫວຽດນາມ, ພັກສັງຄົມນິຍົມເອກະພາບເວເນຊຸລາ ແລະ ພັກອື່ນໆ. ກອງປະຊຸມ ໄດ້ປຶກສາຫາລືກ່ຽວກັບການເຜີຍແຜ່ທິດສະດີຂອງບັນດາພັກຝ່າຍຊ້າຍ ແລະ ການເຄື່ອນໄຫວຂອງພັກ, ແລກປ່ຽນຄວາມຄິດໃນການກໍ່ສ້າງສັງຄົມນິຍົມ, ການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ, ບັນຍາປະດິດ, ການຮັບມືໄພທຳມະຊາດ, ສິ່ງແວດລ້ອມ, ບັນຫາຄວາມຂັດແຍ່ງຕ່າງໆ, ພ້ອມກັນສາມັກຄີຕ້ານການແຊກແຊງ ຂອງລັດທິຟາຊິດທີ່ເປັນໄພຂົ່ມຂູ່ຕໍ່ສັນຕິພາບ, ຊຸກຍູ້ການເພີ່ມທະວີ ການພົວພັນກັບບັນດາກຳລັງການເມືອງຢ່າງກວ້າງຂວາງພາຍໃນໂລກ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ການເມືອງຍີ່ປຸ່ນ:** ວັນທີ 21 ຕຸລາ 2025, ທ່ານ ນາງ ຊານາເອະ ທາຄາອິຊິ (Sanae Takaichi), ຫົວໜ້າພັກເສລີປະຊາທິປະໄຕ (LDP), ໄດ້ຮັບການເລືອກຕັ້ງຈາກລັດຖະສະພາ ໃຫ້ເປັນນາຍົກລັດຖະມົນຕີຄົນ ທີ 104 ຂອງຍີ່ປຸ່ນ ດ້ວຍຄະແນນສຽງ 237 ສຽງ (ຈາກທັງໝົດ 465 ສຽງ) ຊະນະຄູ່ແຂ່ງຄົນສຳຄັນ ຄື ທ່ານ ໂຢຊິຮິໂກະ ໂນດະ (Yoshihiko Noda), ຫົວໜ້າພັກປະຊາທິປະໄຕລັດຖະທຳມະນູນ (CDP) ໄດ້ຮັບ 149 ສຽງ. ໃນວັນທີ 20 ຕຸລາ 2025, ພັກ LDP ໄດ້ບັນລຸຂໍ້ຕົກລົງ ສ້າງຕັ້ງລັດຖະບານປະສົມ ກັບ ພັກປະດິດສ້າງຍີ່ປຸ່ນ (JIP) ພາຍຫຼັງພັກໂຄເມອິໂຕະ (Komeito) ປະກາດລາອອກ ຈາກການຮ່ວມລັດຖະບານ ກ່ອນໜ້ານີ້. ການສະໜັບສະໜູນຈາກພັກ JIP ເປັນປັດໄຈສຳຄັນ ທີ່ເຮັດໃຫ້ທ່ານ ນາງ ທາຄາອິຊິ ໄດ້ຮັບສຽງສ່ວນຫຼາຍໃນລັດຖະສະພາ ກໍຄື ເຮັດໃຫ້ ພັກ LDP ນຳພາປະເທດ ຕໍ່ໄປ, ທັງສ້າງປະຫວັດສາດ ໃຫ້ມີນາຍົກລັດຖະມົນຕີ ເພດຍິງ ຄົນທຳອິດຂອງຍີ່ປຸ່ນ.

**ການປະທ້ວງຢູ່ປະເທດມາດາກາສະກາ:** ການປະທ້ວງ ໄດ້ເລີ່ມຂຶ້ນໃນທ້າຍເດືອນກັນຍາ 2025, ກຸ່ມຜູ້ປະທ້ວງສ່ວນໃຫຍ່ແມ່ນ ໄວໜຸ່ມ (Gen Z) ສາເຫດເບື້ອງຕົ້ນມາຈາກບັນຫາການຂາດແຄນນ້ຳປະປາ ແລະ ໄຟຟ້າ, ການສໍ້ລາດບັງຫຼວງ ແລະ ຄວາມທຸກຍາກທີ່ແຜ່ລາມຢ່າງກວ້າງຂວາງ. ການປະທ້ວງ ໄດ້ຂະຫຍາຍຕົວຢ່າງໄວວາ ແລະ ນຳໄປສູ່ການປ່ຽນແປງຄັ້ງສຳຄັນທາງການເມືອງຂອງປະເທດ. ສະຖານະການ ໄດ້ທະວີຄວາມຮຸນແຮງຂຶ້ນໃນເດືອນຕຸລາ 2025 ເມື່ອໜ່ວຍງານທະຫານຊັ້ນສູງທີ່ມີຊື່ວ່າ CAPSAT ໄດ້ເຂົ້າຮ່ວມກັບກຸ່ມຜູ້ປະທ້ວງ, ບໍ່ປະຕິບັດຕາມຄຳສັ່ງຂອງລັດຖະບານ ແລະ ຫັນມາສະໜັບສະໜູນກຸ່ມຜູ້ປະທ້ວງ ເຮັດໃຫ້ນຳໄປສູ່ການປະເຊີນໜ້າກັນລະຫວ່າງ ກຳລັງທະຫານຂອງລັດຖະບານ ແລະ ກຸ່ມທະຫານທີ່ເຂົ້າຮ່ວມກັບຜູ້ປະທ້ວງ, ສ້າງແຮງກົດດັນຢ່າງໜັກ ໜ່ວງຕໍ່ປະທານາທິບໍດີ ຣາໂຈເອລີນາ ແລະ ຈຳເປັນຕ້ອງຫຼົບໜີອອກຈາກປະເທດ ແລະ ຖືກລັດຖະສະພາປົດອອກຈາກຕຳແໜ່ງ. ຫຼັງຈາກນັ້ນ, ກອງທັບທີ່ນຳໂດຍ ພັນເອກ ໄມເຄີລ ຣັນດຣິອານີຣິນາ ຜູ້ບັນຊາການທະຫານ CAPSAT ໄດ້ປະກາດຍຶດອຳນາດ ແລະ ຈະຈັດຕັ້ງລັດຖະບານຊົ່ວຄາວ ພາຍໃນ 30-60 ວັນ. ການປະທ້ວງດັ່ງກ່າວ ເຮັດໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 22 ຄົນ. ເຫດການໃນຄັ້ງນີ້ ໄດ້ກາຍເປັນອີກຕົວຢ່າງໜຶ່ງຂອງພະລັງຂອງໄວໜຸ່ມ ທີ່ສາມາດສ້າງການປ່ຽນແປງທາງ

ການເມືອງ ເມື່ອຖືກກະຕຸ້ນຈາກບັນຫາທາງສັງຄົມ ແລະ ເສດຖະກິດ ເຊັ່ນດຽວກັບການໂຄ່ນລົ້ມລັດຖະບານເນປານ ໃນໄລຍະຕົ້ນເດືອນກັນຍາ 2025 ຜ່ານມາ.

**2) ພາກພື້ນເອີຣົບ-ອາເມຣິກາ**

**ບັນຫາຄວາມຂັດແຍ່ງ ລະຫວ່າງ ອູແກຣນ ແລະ ຣັດເຊຍ:** ຣັດເຊຍ ສືບຕໍ່ໂຈມຕີດ້ວຍໂດຣນ ແລະ ລູກສອນໄຟ ໃສ່ໂຄງສ້າງພື້ນຖານດ້ານພະລັງງານຂອງ ອູແກຣນ ຢ່າງໜັກ ໂດຍສະເພາະ ໂຮງງານອາຍກ໊າສໃນພາກພື້ນ Kharkiv ແລະ ໂຮງໄຟຟ້າ ໃນຫຼາຍພາກພື້ນ, ເຮັດໃຫ້ ອູແກຣນ ຕ້ອງປະກາດຕັດໄຟຟ້າຊົ່ວຄາວ, ປະຊາຊົນອູແກຣນຈຳນວນຫຼາຍ ໄດ້ຮັບຜົນກະທົບ ຈາການຂາດແຄນໄຟຟ້າ, ນໍ້າປະປາ ແລະ ລະບົບຂົນສົ່ງຄົມມະນາຄົມ. ໃນວັນທີ 17 ຕຸລາ 2025, ທ່ານ ໂດ ນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ແລະ ທ່ານ ວະລາດີເມຍ ເຊເລສະກີ, ປະທານາທິບໍດີ ອູແກຣນ ໄດ້ພົບປະ ທີ່ທຳນຽບຂາວ ເພື່ອປຶກສາຫາລື ກ່ຽວກັບການສະໜັບສະໜູນດ້ານອາວຸດໃຫ້ແກ່ ອູແກຣນ ໂດຍສະເພາະລະບົບປ້ອງກັນໄພທາງອາກາດ, ແຕ່ບໍ່ປະສົບຜົນສຳເລັດ ເນື່ອງຈາກ ທ່ານ ທຣຳ ກ່າວວ່າ ບໍ່ສາມາດສະໜອງລູກສອນໄຟດັ່ງກ່າວໃຫ້ອູແກຣນໄດ້ ເພາະຈຳເປັນຕ້ອງຮັກສາອາວຸດໄວ້ ເພື່ອການປ້ອງກັນປະເທດ ແລະ ເພື່ອລີກລ່ຽງບໍ່ໃຫ້ອູແກຣນໂຈມຕີເລິກເຂົ້າໄປໃນຣັດເຊຍ ຊຶ່ງອາດນຳໄປສູ່ສະຖານະການທີ່ເຄັ່ງຕຶງຍິ່ງຂຶ້ນ. ສ່ວນແຜນກອງປະຊຸມສຸດລະຫວ່າງ ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີຣັດເຊຍ ແລະ ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ໄດ້ຖືກເລື່ອນອອກໄປຢ່າງບໍ່ມີກຳນົດ, ຍ້ອນ ທ່ານ ທຣຳ ອ້າງວ່າ ເຖິງວ່າຈະມີການປະຊຸມ ກໍບໍ່ສາມາດຕົກລົງຫຍັງໄດ້ ຍ້ອນ ຣັດເຊຍ ຮຽກຮ້ອງຫຼາຍເກີນໄປ. ຂະນະທີ່ ໃນວັນ 23 ຕຸລາ 2025, ຊູແອດ ໄດ້ສົ່ງເຮືອບິນຂັບໄລ່ Gripen ຈຳນວນ 150 ລຳ ໃຫ້ແກ່ ອູແກຣນ ລວມເຖິງການລົງນາມຂໍ້ຕົກລົງຮ່ວມກັບ ອູແກຣນ ວ່າດ້ວຍ ການປ້ອງກັນທາງອາກາດລະຫວ່າງສອງປະເທດ.

**ການເມືອງຊ໊ອກຊີ:** ວັນທີ 05 ຕຸລາ 2025, ກຸ່ມພັກຝ່າຍຄ້ານ ທີ່ໄດ້ຮັບການສະໜັບສະໜູນຈາກ ເອີຣົບ ໄດ້ນຳພາປະຊາຊົນ ເດີນຂະບວນປະທ້ວງຕາມຖະໜົນ ທີ່ນະຄອນຫຼວງ ຕາບີລີຊີ ແລະ ໄດ້ບຸກເຂົ້າສຳນັກງານ ຂອງນາຍົກລັດຖະມົນຕີ ເພື່ອປະທ້ວງ ອ້າງວ່າ ລັດຖະບານຊ໊ອກຊີ ເປັນຜູ້ໃຫ້ການສະໜັບສະໜູນລັດຖະບານຣັດເຊຍ. ການປະທ້ວງຄັ້ງນີ້ ເກີດຂຶ້ນໃນວັນດຽວກັນກັບ ພັກ Georgia Dream ຂອງລັດຖະບານ ໄດ້ປະກາດໄຊຊະນະການເລືອກຕັ້ງທ້ອງຖິ່ນ ເຮັດໃຫ້ກຸ່ມພັກຝ່າຍຄ້ານ ບໍ່ພໍໃຈ ຣວມຕົວກັນເດີນຂະບວນປະທ້ວງ ບໍ່ຍອມຮັບຜົນການເລືອກຕັ້ງດັ່ງກ່າວ.

**ການເມືອງຝຣັ່ງ:** ພາຍຫຼັງ ທ່ານ ຟອງຊົວ ບາຍຣູ, ລາອອກຈາກການເປັນນາຍົກລັດຖະມົນຕີ, ຕໍ່ມາ ທ່ານແອມມານູແອນ ມາກຼົງ, ປະທານາທິບໍດີຝຣັ່ງ ໄດ້ແຕ່ງຕັ້ງ ທ່ານ ເຊບາສຕຽນ ເລກໍຣົນູ, ເປັນນາຍົກລັດຖະມົນຕີ ແທນ. ຫຼັງຈາກນັ້ນ, ວັນທີ 05 ຕຸລາ 2025, ທ່ານ ເຊບາສຕຽນ ເລກໍຣົນູ ໄດ້ປະກາດລາຍຊື່ຄະນະລັດຖະບານຊຸດໃໝ່ ຊຶ່ງສ່ວນໃຫຍ່ເປັນບຸກຄົນເກົ່າ ທີ່ເຄີຍຢູ່ໃນລັດຖະບານຊຸດກ່ອນ, ເຮັດໃຫ້ເກີດສຽງວິພາກວິຈານ ຢ່າງຫຼວງຫຼາຍ ແລະ ຮຸນແຮງ ຈາກພັກຮ່ວມລັດຖະບານ ແລະ ພັກຝ່າຍຄ້ານ ກ່ຽວກັບ ການຈັດຕັ້ງຄະນະລັດຖະບານດັ່ງກ່າວ ເຮັດໃຫ້ ທ່ານເຊບາສຕຽນ ເລກໍຣົນູ ປະກາດລາອອກຈາກຕຳແໜ່ງຢ່າງກະທັນຫັນ ແຕ່ບໍ່ໄດ້ຮັບການເຫັນດີຈາກ ທ່ານ ມາກຼົງ, ວັນທີ 10 ຕຸລາ 2025, ທ່ານ ເຊບາສຕຽນ ເລກໍຣົນູ ຈຶ່ງໄດ້ຖືກແຕ່ງຕັ້ງໃຫ້ເປັນ ນາຍົກລັດຖະມົນຕີຄືນໃໝ່.

**ຄວາມຂັດແຍ່ງ ທາງການຄ້າ ລະຫວ່າງ ສ.ອາເມຣິກາ ແລະ ສປ ຈີນ:** ໃນວັນທີ 10 ຕຸລາ 2025, ປະທານາທິບໍດີ ໂດ ນັນ ທຣຳ ຂອງ ສ.ອາເມຣິກາ ໄດ້ປະກາດຍົກລະດັບສົງຄາມການຄ້າກັບຈີນ ໂດຍການເກັບພາສີນຳເຂົ້າສິນຄ້າທຸກຊະນິດຈາກຈີນ ເປັນ 130% ຈາກແຕ່ກ່ອນ 30% ຊຶ່ງຈະມີຜົນບັງຄັບໃຊ້ ນັບແຕ່ວັນທີ 01 ພະຈິກ 2025 ເປັນຕົ້ນໄປ.

**3) ພາກພື້ນຕາເວັນອອກກາງ**

**ຄວາມຂັດແຍ່ງເຂດກາຊາ**: ໃນວັນທີ 06 ຕຸລາ 2025, ການເຈລະຈາລະຫວ່າງ ອິດສະຣາແອນ ແລະ ກຸ່ມຮາມາສ ໄດ້ຈັດຂຶ້ນທີ່ ເອຢິບ ຊຶ່ງສອງຝ່າຍ ໄດ້ຕົກລົງເຫັນດີ ປ່ອຍຕົວປະກັນ ແລະ ນັກໂທດທັງໝົດຂອງທັງສອງຝ່າຍ. ສ່ວນ ອິດສະຣາແອນ ຕ້ອງຖອນກຳລັງອອກຈາກເຂດກາຊາ. ສ່ວນ ເອຢິບ, ຊອກດານີ, ສະຫະນະຄອນ ເອເມຣັດ ອາຣັບ, ອິນໂດເນເຊຍ, ປາກິດສະຖານ, ຕວັກກີ, ອາຣັບບີ ຊາອຸດິດ ແລະ ກາຕາ ໄດ້ອອກຖະແຫຼງການຮ່ວມໃນວັນທີ 05 ຕຸລາ 2025, ສະແດງຄວາມຍິນດີຕໍ່ການດຳເນີນການຂອງ ອິດສະຣາແອນ ແລະ ກຸ່ມຮາມາສ ຕາມແຜນການ ທີ່ທ່ານ ໂດ ນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ເປັນຜູ້ສະເໜີ. ພາຍຫຼັງ ການຕົກລົງດັ່ງກ່າວ, ອິດສະຣາແອນ ໄດ້ປ່ອຍຕົວນັກໂທດປາແລັດສະຕິນ 2,000 ຄົນ ແລະ ອະນຸຍາດໃຫ້ລົດບັນທຸກເຄື່ອງຊ່ວຍເຫຼືອເຂົ້າໄປເຂດກາຊາ ຕາມທີ່

ໄດ້ຕົກລົງກັນໄວ້. ສ່ວນ ກຸ່ມຮາມາສ ໄດ້ປ່ອຍຕົວປະກັນອິດສະຣາແອນ 20 ຄົນ ແລະ ຊາກສົບຕົວປະກັນທີ່ເສຍຊີວິດ ເພີ່ມອີກ 04 ສົບ.

ແນວໃດກໍຕາມ, ໃນວັນທີ 19 ຕຸລາ 2025, ກອງທັບອິດສະຣາແອນ ໄດ້ກັບມາໂຈມຕີທາງອາກາດອີກຄັ້ງ ໃສ່ອຸໂມງ ແລະ ສາງອາວຸດ ຂອງກຸ່ມຮາມາສ ໂດຍອ້າງວ່າ ເພື່ອຕອບໂຕ້ ທີ່ກຸ່ມຮາມາກ ຍິງລູກສອນໄຟ ໃສ່ລົດຖັງ ແລະ ທະຫານອິດສະຣາແອນ ເຮັດໃຫ້ມີຜູ້ເສຍຊີວິດຈຳນວຍຫຼາຍ ແລະ ອ້າງວ່າ ກຸ່ມຮາມາສ ເປັນຜູ້ລະເມີດຂໍ້ຕົກລົງ.

## II. ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ

### 1) ສະຫາຍ ເລຂາທິການໃຫຍ່ ພັກ ປປ ລາວ ພົບປະກັບ ສະຫາຍ ເລຂາທິການໃຫຍ່ ພັກແຮງງານເກົາຫຼີ



ໃນລະຫວ່າງວັນທີ 7-8 ຕຸລາ 2025, ສະຫາຍ ທອງລຸນ ສີສຸລິດ, ເລຂາ ທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ນຳພາຄະນະຜູ້ແທນຂັ້ນສູງ ຂອງ ພັກ ແລະ ລັດ ຢ້ຽມຢາມລັດ ຖະກິດ ຢູ່ ສປປ ເກົາຫຼີ ເພື່ອສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອ ມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ສປປ ເກົາຫຼີ ໃຫ້ນັບມື້ນັບແໜ້ນແຟ້ນ ແລະ ຂະຫຍາຍຕົວຍິ່ງໆຂຶ້ນ.

ການຢ້ຽມຢາມລັດຖະກິດຄັ້ງນີ້ ໄດ້ມີຂຶ້ນໃນທ່າມກາງທີ່ສອງປະເທດ ສປປ ລາວ ແລະ ສປປ ເກົາຫຼີ ພວມສະເຫຼີມສະຫຼອງ ແລະ ຂໍ່ານັບຮັບຕ້ອນວັນຄົບຮອບ 60 ປີ ແຫ່ງການພົບປະສຸດຍອດຄັ້ງທຳອິດ ທີ່ ນະຄອນຫຼວງພຽງຢາງ ຂອງ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວ ແລະ ປະທານ ກິມ ອິນ ຊຸງ, ຜູ້ນຳທີ່ຍິ່ງໃຫຍ່ ແລະ ອາມາຕະຂອງປະຊາຊົນເກົາຫຼີ ແລະ ຂໍ່ານັບຊົມເຊີຍວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 80 ປີ, ທັງເປັນການສະເຫຼີມສະຫຼອງສາຍພົວພັນທາງການທູດ ລະຫວ່າງ ສປປ ລາວ ແລະ ສປປ ເກົາຫຼີ ຄົບຮອບ 50 ປີ.

ວັນທີ 07 ຕຸລາ 2025, ທີ່ ຫໍປະຊຸມສະໜາມກິລານະຄອນຫຼວງພຽງຢາງ ໄດ້ມີພິທີຕ້ອນຮັບທາງການຢ່າງຍິ່ງໃຫຍ່ ແລະ ສົມກຽດ ໃຫ້ແກ່ຄະນະຜູ້ແທນຂັ້ນສູງຂອງ ພັກ ແລະ ລັດ ແຫ່ງ ສປປ ລາວ ໂດຍໄດ້ມີການກວດແຖວກອງກຽດຕິຍົດ ແລະ ຍິງປືນໃຫຍ່ 21 ນັດ. ໃນພິທີຕ້ອນຮັບຢ່າງເປັນທາງການ ໄດ້ມີສະມາຊິກພັກ, ພະນັກງານ, ກຳລັງປະກອບອາວຸດ, ນ້ອງນ້ອຍເຍົາວະຊົນ ແລະ ປະຊາຊົນນະຄອນຫຼວງພຽງຢາງ ຫຼາຍກວ່າ 1000 ຄົນ ໃຫ້ການຕ້ອນຮັບຢ່າງຟົດຟື້ນ ແລະ ສົມກຽດ. ຫຼັງຈາກນັ້ນ, ໄດ້ມີການພົບປະລະຫວ່າງ ສອງເລຂາທິການໃຫຍ່ ພັກປະຊາຊົນປະຕິວັດລາວ ແລະ ພັກແຮງງານເກົາຫຼີ ທີ່ ສຳນັກງານຫ້ອງວ່າການສູນກາງພັກແຮງງານເກົາຫຼີ, ສອງຝ່າຍ ໄດ້ແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ດ້ວຍບັນຍາກາດແຫ່ງໄມຕີຈິດມິດຕະພາບ ເພື່ອພ້ອມກັນສືບຕໍ່ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອມາແຕ່ດົນນານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ສປປ ລາວ ແລະ ສປປ ເກົາຫຼີ, ສືບຕໍ່ແລກປ່ຽນການຢ້ຽມຢາມເຊິ່ງກັນ ແລະ ກັນຂອງການນຳຂັ້ນສູງ ແລະ ຂັ້ນຕ່າງໆຂອງສອງຝ່າຍ ໃຫ້ເປັນປົກກະຕິ, ຊຸກຍູ້ສົ່ງເສີມການພົວພັນຮ່ວມມືສອງຝ່າຍ ໃນຂົງເຂດວັດທະນະທຳ-ສັງຄົມ, ການສຶກສາ, ການຮ່ວມມືທາງດ້ານການກໍ່ສ້າງພັກ ແລະ ດ້ານອື່ນໆນຳກັນ ໃນຫຼາຍຮູບແບບທີ່ເໝາະສົມ. ສອງຝ່າຍ ຍັງໄດ້ແລກປ່ຽນຄຳຄິດເຫັນກ່ຽວກັບບັນຫາພາກພື້ນ ແລະ ສາກົນຈຳນວນໜຶ່ງທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ.

### 2) ສານອວຍພອນ ວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 80 ປີ

ໃນວັນທີ 7 ຕຸລາ 2025, ໃນໂອກາດຢ້ຽມຢາມລັດຖະກິດ ສປປ ເກົາຫຼີ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ ໄດ້ມອບສານອວຍພອນ ສະຫາຍ ກິມເຈິງອຸນ, ເລຂາທິການໃຫຍ່ ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ສປປ ເກົາຫຼີ ເນື່ອງໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 80 ປີ (10/10/1945-10/10/2025), ເຊິ່ງມີເນື້ອໃນບາງຕອນດັ່ງນີ້:

ເນື່ອງໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 80 ປີ, ຂ້າພະເຈົ້າ ຕາງໜ້າພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ຂໍສະແດງຄວາມຂໍ່ານັບຊົມເຊີຍອັນອົບອຸ່ນ ແລະ ສົ່ງຄໍາອວຍພອນໄຊອັນປະເສີດ ມາຍັງ ສະຫາຍ ແລະ ຜ່ານສະຫາຍ ໄປຍັງຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ, ສະມາຊິກພັກ ແລະ ປະຊາຊົນ ເກົາຫຼີ ອ້າຍນ້ອງທຸກຖ້ວນໜ້າ. ຂ້າພະເຈົ້າມີຄວາມພາກພູມໃຈ ແລະ ປິຕິຍິນດີຢ່າງຍິ່ງ ທີ່ເຫັນວ່າ ໃນຕະຫຼອດ 80 ປີຜ່ານມາ, ພາຍໃຕ້ການນໍາພາອັນເດັດດ່ຽວເຂັ້ມແຂງ ຂອງພັກແຮງງານເກົາຫຼີ, ປະເທດ ແລະ ປະຊາຊົນເກົາຫຼີ ອ້າຍນ້ອງສາມາດຍາດໄດ້ຜົນສໍາເລັດອັນໃຫຍ່ຫຼວງຮອບດ້ານ, ຮັກສາໝາກຜົນຂອງການປະຕິວັດໄດ້ຢ່າງໝັ້ນຄົງ, ການເມືອງມີສະຖຽນລະພາບໜັກແໜ້ນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ເສດຖະກິດໄດ້ຮັບການພັດທະນາຢ່າງໝັ້ນທ່ຽງ, ຊີວິການເປັນຢູ່ຂອງປະຊາຊົນເກົາຫຼີ ໄດ້ຮັບການຍົກລະດັບຂຶ້ນເທື່ອລະກ້າວ, ບົດບາດ ແລະ ອິດທິພົນຂອງ ສປປ ເກົາຫຼີ ພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ, ພວກຂ້າພະເຈົ້າເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນໍາພາ ອັນສະຫຼາດສ່ອງໃສ ຂອງພັກແຮງງານເກົາຫຼີ ທີ່ມີ ສະຫາຍເລຂາທິການໃຫຍ່ ກິມເຈິງອຸນ ເປັນແກນກາງນໍາພາ ແລະ ເປັນຜູ້ສືບທອດ ແນວຄິດຈຸເຊ ທີ່ຍິ່ງໃຫຍ່ນັ້ນ, ພັກແຮງງານເກົາຫຼີ ຈະສືບຕໍ່ນໍາພາປະຊາຊົນ ເກົາຫຼີ ອ້າຍນ້ອງ ຍາດໄດ້ຜົນສໍາເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາ ສປປ ເກົາຫຼີ ໃຫ້ຍິ່ງໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ.

ຂໍອວຍພອນໃຫ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ເກົາຫຼີ ທີ່ ລິເລີ່ມໂດຍ ປະທານ ກິມອິນຊຸງ ແລະ ປະທານ ໄກສອນ ພົມວິຫານ ທີ່ແສນເຄົາລົບຮັກ, ໄດ້ຮັບການເພີ່ມພູນຄູນສ້າງໂດຍບັນດາຮຸ່ນການນໍາ ແລະ ປະຊາຊົນລາວ-ເກົາຫຼີ ຈົ່ງສືບຕໍ່ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ ກໍຄື ເພື່ອພາລະກິດສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື ເພື່ອການພັດທະນາ ຢູ່ໃນພາກພື້ນ ແລະ ໃນໂລກ.

ນອກຈາກນີ້, ໃນວັນທີ 6 ຕຸລາ 2025, ສະຫາຍ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ກໍໄດ້ມອບໂທລະເລກອວຍພອນ ຜ່ານ ສະຖານເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈໍາ ສປປ ລາວ ເຖິງ ສະຫາຍ ກິມຊອງນາມ, ກໍາມະການສໍາຮອງກົມການເມືອງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກແຮງງານເກົາຫຼີ ໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 80 ປີ ດັ່ງກ່າວ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ຄະນະຜູ້ແທນແຂວງຈ້ຽງຊູ້, ສປ ຈີນ ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ



ລະຫວ່າງວັນທີ 14-16 ຕຸລາ 2025, ຄະນະຜູ້ແທນແຂວງຈ້ຽງຊູ້, ສປ ຈີນ ນຳໂດຍ ສະຫາຍ Chu Yonghong, ກຳມະການປະຈຳພັກແຂວງ, ເລຂາທິການຄະນະບໍລິຫານງານພັກແຂວງຈ້ຽງຊູ້, ສປ ຈີນ ພ້ອມດ້ວຍຄະນະ ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ; ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ປອ. ເພັດ ພົມພິພັກ, ກຳມະການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ, ປະທານສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນກາງ. ສະຫາຍ ປອ. ເພັດ ພົມພິພັກ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນດັ່ງກ່າວ ເຊິ່ງເປັນການປະກອບສ່ວນເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືແບບຄູ່ຮ່ວມຍຸດທະສາດ, ຮອບດ້ານ, ໝັ້ນຄົງຍາວນານ ຕາມທິດ 4 ດີ ແລະ ຄູ່ຮ່ວມຊາຕາກຳລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ຈີນ.

### 2) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໃຫ້ສຳພາດໃນໂອກາດ ສະເຫຼີມສະຫຼອງວັນການທູດລາວ ຄົບຮອບ 80 ປີ



ວຽກງານການຕ່າງປະເທດໃນສາຍພັກ ຖືເປັນຂະແໜງການໜຶ່ງທີ່ມີບົດບາດສຳຄັນ ໃນການວຽກງານການທູດ ກໍຄືການຕ່າງປະເທດ ຂອງພັກ, ຂອງຊາດລາວ ເຊິ່ງໄດ້ປະກອບສ່ວນສຳຄັນ ເຂົ້າໃນພາລະກິດຍຸດທະສາດຂອງພັກ, ຂອງຊາດບໍ່ວ່າຈະຢູ່ໃນສະໄໝຕໍ່ສູ້ກູ້ຊາດ ກໍຄື ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ ໃນປະຈຸບັນ.

ຕະຫຼອດໄລຍະຜ່ານມາ, ພັກໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ ໃນການຊຸກຍູ້ວຽກງານການຕ່າງປະເທດ ຢ່າງຕັ້ງໜ້າ, ໃນສະໄໝຕໍ່ສູ້ກູ້ຊາດ ເຖິງຈະມີຄວາມຫຍຸ້ງຍາກ ແຕ່ພັກເຮົາ ກໍ່ໄດ້ສືບຕໍ່ເຄື່ອນໄຫວວຽກງານການຕ່າງປະ ເທດ ຢ່າງມີໄຫວພິບ ໂດຍໄດ້ມີການເຄື່ອນໄຫວພົວພັນກັບ ບັນດາພັກເພື່ອນມິດຮ່ວມອຸດົມການຢ່າງຫ້າວຫັນ; ໃນນັ້ນ, ການນຳຮຸ່ນທຳອິດ ນຳໂດຍ ປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ກໍໄດ້ເຄື່ອນໄຫວຢ້ຽມຢາມຕ່າງປະເທດ ຫຼາຍຄັ້ງ

ແລະ ໄດ້ຕ້ອນຮັບຄະນະຜູ້ແທນຂອງພັກເພື່ອນມິດ ມາຢ້ຽມຢາມລາວ ຫຼາຍຄະນະ ເຊິ່ງສາມາດຂຶ້ນຂວາຍຄວາມເຂົ້າໃຈ, ການຮ່ວມມື ແລະ ສະໜັບສະໜູນຊ່ວຍເຫຼືອຢ່າງຫຼວງຫຼາຍ ໃຫ້ແກ່ການປະຕິວັດລາວ.

ພາຍຫຼັງການສະຖາປະນາ ສປປ ລາວ, ວຽກງານການຕ່າງປະເທດ ໃນສາຍພັກ ກໍສືບຕໍ່ໄດ້ຮັບການຊຸກຍູ້ໃຫ້ເຕີບໃຫຍ່ຂະຫຍາຍຕົວ ທັງດ້ານປະລິມານ ແລະ ຄຸນນະພາບ; ໂດຍສະເພາະ ພາຍຫຼັງການກຳນົດອອກແນວທາງການປ່ຽນແປງໃໝ່ ຍິ່ງເປັນເງື່ອນໄຂທີ່ຊຸກຍູ້ໃຫ້ຂະແໜງການຕ່າງປະເທດ ໄດ້ເປີດກວ້າງການພົວພັນຮ່ວມມື, ຂະຫຍາຍຕົວຢ່າງຍິ່ງຂຶ້ນ.

ທາງດ້ານກົງຈັກ, ເວົ້າສະເພາະ ຄະນະພົວພັນຕ່າງປະເທດສູນກາງພັກ ທີ່ເປັນໜ່ວຍງານທີ່ມີພາລະບົດບາດ ເປັນເສນາທິການດ້ານວຽກງານການຕ່າງປະເທດ ໃຫ້ແກ່ສູນກາງພັກ ກໍ່ໄດ້ຮັບການຊຸກຍູ້, ປັບປຸງ ແລະ ເຕີບໃຫຍ່ຂະຫຍາຍຕົວ ອີງຕາມຄວາມຮຽກຮ້ອງຕ້ອງການຂອງສະພາບການໃນແຕ່ລະໄລຍະ. ກ່ອນປີ 1975 ອົງການທີ່ເຮັດວຽກງານຕ່າງປະເທດ ທັງສາຍພັກ ແລະ ສາຍລັດ ໄດ້ລວມສູນຢູ່ບ່ອນດຽວ, ນັ້ນຄື: ຫ້ອງການຕໍ່ສູ້ການເມືອງ ແລະ ຕ່າງປະເທດຂອງແນວລາວສ້າງຊາດ ມີສຳນັກງານຢູ່ເມືອງວຽງໄຊ, ແຂວງຫົວພັນ ຈົນຕົກມາຮອດ ເດືອນມິຖຸນາ 1983 ຄະນະພົວພັນຕ່າງປະເທດສູນກາງພັກ ຈຶ່ງໄດ້ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການ (ກ່ອນນີ້ 1975-1983 ແມ່ນ ກະຊວງການຕ່າງປະເທດ ຮັບຜິດຊອບວຽກງານພົວພັນຕ່າງປະເທດ ທັງສາຍພັກ, ລັດ ແລະ ອົງການຈັດຕັ້ງມະຫາຊົນ) ເຊິ່ງໄດ້ເຄື່ອນໄຫວວຽກງານການຕ່າງປະເທດ ຕິດແໜ້ນກັບກະຊວງການຕ່າງປະເທດ ແລະ ມີຫຼາຍຊ່ວງກໍໄດ້ຮ່ວມເປັນ ອົງຄະນະພັກອັນດຽວກັນ ຈົນຕົກມາຮອດປີ 2016 ຈຶ່ງໄດ້ແຍກເປັນ ອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສືບຕໍ່ເຕີບໃຫຍ່ຂະຫຍາຍຕົວຈົນມາຮອດປະຈຸບັນ ຖືວ່າ ມີໂຄງປະກອບການຈັດຕັ້ງທີ່ຄົບຖ້ວນພໍສົມຄວນ ປະກອບດ້ວຍ 5 ກົມ ແລະ 1 ຫ້ອງການ.

ທາງດ້ານແນວທາງນະໂຍບາຍ, ສູນກາງພັກ ໄດ້ເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ຊິດ ຕໍ່ຂະແໜງການຕ່າງປະເທດ ແລະ ໄດ້ກຳນົດແນວທາງນະໂຍບາຍ ທີ່ສະຫຼາດສ່ອງໃສ, ຖືກຕ້ອງ ແລະ ສອດຄ່ອງກັບສະພາບການຕົວຈິງໃນແຕ່ລະໄລຍະ; ຈາກແນວທາງ ຜູກມິດກັບທຸກປະເທດ, ບໍ່ຮ່ວມກຸ່ມ ແລະ ເປັນກາງ ໃນເມື່ອກ່ອນ ຈົນມາຮອດແນວທາງການເປີດກວ້າງການຮ່ວມມື ຕາມແນວທາງການປ່ຽນແປງໃຫມ່ ທີ່ສະເໜີອອກໃນກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ ໃນປີ 1986 ແລະ ແນວທາງເພີ່ມມິດຫຼຸດຜ່ອນສັດຕູ, ເປີດກວ້າງການພົວພັນຕ່າງປະເທດ ໂດຍບໍ່ຈຳແນກລະບອບການເມືອງ ໃນຫຼາຍຮູບແບບ ແລະ ຫຼາຍລະດັບ ໃນປະຈຸບັນ ເຊິ່ງໄດ້ເປັນເຂັມທິດເຍືອງທາງ ໃຫ້ແກ່ວຽກງານການຕ່າງປະເທດ ໃນສາຍພັກໄດ້ສືບຕໍ່ເຕີບໃຫຍ່ຂະຫຍາຍຕົວຢ່າງແຂງແຮງ. ປະຈຸບັນ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສືບຕໍ່ປະຕິບັດໜ້າທີ່ການເມືອງຂອງຕົນ ຕາມຄຳຂວັນ “ຄິດເລິກ ເບິ່ງໄກ ໄປຖືກ” ແລະ ການຍົກລະດັບຂີດຄວາມສາມາດຂອງສະມາຊິກພັກ-ພະນັກງານ ທີ່ໄດ້ສະເໜີອອກໃນກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ທີ່ຫາກໍ່ສຳເລັດ ເມື່ອບໍ່ດົນມານີ້.

ທາງດ້ານການຮ່ວມມື, ມາຮອດປະຈຸບັນ ພັກເຮົາ ໄດ້ມີການພົວພັນກັບ 145 ພັກການເມືອງ ໃນ 82 ປະເທດທົ່ວໂລກ; ໃນນັ້ນ, ໃນຂອບ 2 ຝ່າຍ ພັກໄດ້ຖືເອົາພັກເພື່ອນມິດຍຸດທະສາດຮ່ວມອຸດົມການເປັນບູລິມະສິດໃນການພົວພັນຮ່ວມມື ໂດຍໄດ້ສືບຕໍ່ເສີມຂະຫຍາຍ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່ ຄວາມສາມັກຄີພິເສດ ກັບພັກກອມມູນິດຫວຽດນາມ, ສືບຕໍ່ສາຍພົວພັນມິດຕະພາບ ຄູ່ຮ່ວມມືຍຸດທະສາດຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊາຕາກຳດຽວກັນ ກັບພັກກອມມູນິດຈີນ, ເສີມຂະຫຍາຍການພົວພັນ ກັບບັນດາພັກເພື່ອນມິດຍຸດທະສາດ ແລະ ພັກເພື່ອນມິດອື່ນໆ ຢ່າງກວ້າງຂວາງ. ໄລຍະຜ່ານມາ, ໄດ້ມີການແລກປ່ຽນຢ້ຽມຢາມເຊິ່ງກັນແລະກັນ ລະຫວ່າງການນຳໃນແຕ່ລະຂັ້ນ ຢ່າງເປັນປົກກະຕິ, ມີກົນໄກພົບປະ 3 ຝ່າຍ ລາວ-ຫວຽດນາມ-ກຳປູເຈຍ ແລະ ກົນໄກອື່ນໆ, ໄດ້ເຊັນສັນຍາຮ່ວມມືນຳກັນ ເຊິ່ງກວມເອົາ ການຝຶກອົບຮົມພະນັກງານ, ການຈັດສຳມະນາທິດສະດີ ແລະ ສ້າງກົນໄກການຮ່ວມມື ລະຫວ່າງ ຂະແໜງການອ້ອມຂ້າງສູນກາງພັກ ກັບບັນດາຄູ່ຮ່ວມມືຕ່າງໆ.

ໃນຂອບຫຼາຍຝ່າຍ, ພັກເຮົາ ກໍໄດ້ມີການເຄື່ອນໄຫວຢ່າງຫ້າວຫັນ ເພື່ອເຊີດຊູຄະນະບົດບາດຂອງພັກໃນເວທີພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນ ໄດ້ເຂົ້າຮ່ວມບັນດາກອງປະຊຸມພາກພື້ນ ແລະ ສາກົນ ຂອງບັນດາພັກການເມືອງ ເຊັ່ນ : ກອງປະຊຸມສາກົນ ຂອງບັນດາພັກກອມມູນິດ ແລະ ກຳມະກອນສາກົນ (IMCWP), ກອງປະຊຸມສາກົນ ຂອງບັນດາພັກການເມືອງອາຊີ (ICAPP), ກອງປະຊຸມພັກກອມມູນິດຈີນ ກັບບັນດາພັກການເມືອງສາກົນ, ກອງປະຊຸມໂຕະມົນ ພັກຣັດເຊຍເອກະພາບ ກັບພັກການເມືອງປະເທດອາຊຽນ, ເວທີສຳມະນາສັງຄົມນິຍົມ (ລາວ, ຫວຽດນາມ, ຈີນ, ສປປ ເກົາຫຼີ, ກູບາ), ກອງປະຊຸມບັນດາພັກການເມືອງ, ຄັງປັນຍາ ແລະ ອົງການຈັດຕັ້ງພົນລະເຮືອນ ກຸ່ມປະເທດອຸດສາຫະກຳທັນສະໄໝ, ກອງປະຊຸມສາກົນຂອງບັນດາພັກການເມືອງ ກຸ່ມ BRICS, ກອງປະຊຸມເວທີປຶກສາຫາລື

ຂອງບັນດາຝ່າຍສະໜັບສະໜູນ ການຕ້ານລັດທິລ່າເມືອງຂຶ້ນແບບໃໝ່ ໃນສະໄໝໃໝ່ - ຂະບວນການ "ເພື່ອເສລີພາບຂອງບັນດາຊາດ" ແລະ ອື່ນໆ.

ວຽກງານການທູດປະຊາຊົນ ຕະຫຼອດໄລຍະຜ່ານມາ ພັກໄດ້ໃຫ້ຄວາມສຳຄັນຕໍ່ວຽກງານດັ່ງກ່າວ ແລະ ໄດ້ຊຸກຍູ້ໃຫ້ການທູດປະຊາຊົນ ໃຫ້ສືບຕໍ່ເຕີບໃຫຍ່ຂະຫຍາຍຕົວເປັນກ້າວໆມາ ແລະ ຖືເປັນອີກວຽກງານປາຍແຫຼມ ໃນການຕໍ່ສູ້ຂົນຂວາຍ, ຍາດແຍ່ງການຮ່ວມມືຊ່ວຍເຫຼືອຈາກບັນດາອົງການຈັດຕັ້ງມະຫາຊົນ ຂອງບັນດາປະເທດເພື່ອນມິດໄດ້ເປັນຈຳນວນຫຼວງຫຼາຍ ເຊິ່ງໄດ້ປະກອບສ່ວນສຳຄັນ ໃນການສ້າງສາພັດທະນາເສດຖະກິດ-ສັງຄົມຂອງລາວ ເປັນຕົ້ນແມ່ນດ້ານການກໍ່ສ້າງພື້ນຖານໂຄງລ່າງ, ໂຮງຮຽນ, ໂຮງໝໍຕະຫຼອດຮອດບັນດາກິດຈະກຳທາງດ້ານວັດທະນະທຳ, ຮີດຄອງປະເພນີ ແລະ ການສະເຫຼີມສະຫຼອງວັນສຳຄັນຂອງບັນດາປະເທດ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນ ເຊິ່ງມາຮອດປະຈຸບັນ ພັກ ປປ ລາວ ໄດ້ສ້າງຕັ້ງສະມາຄົມມິດຕະພາບກັບຕ່າງປະເທດທັງໝົດມີ 20 ສະມາຄົມ ແລະ 1 ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ກັບຕ່າງປະເທດ; ສ່ວນຢູ່ຂັ້ນທ້ອງຖິ່ນ ຍັງໄດ້ສ້າງຕັ້ງສະມາຄົມມິດຕະພາບ ລາວ-ຫວຽດນາມ, ລາວ-ຈີນ ຢູ່ 18 ແຂວງຂອງລາວ ແລະ ສະມາຄົມມິດຕະພາບ ລາວ-ກຳປູເຈຍ ຢູ່ແຂວງຈຳປາສັກ ແລະ ອັດຕະປື.

ເວົ້າລວມແລ້ວ, ພາຍໃຕ້ການນຳພາ-ຊີ້ນຳຢ່າງໃກ້ຊິດຂອງພັກ ວຽກງານການຕ່າງປະເທດ ໃນສາຍພັກ ໄດ້ຮັບການຊຸກຍູ້ໃຫ້ເຕີບໃຫຍ່ຂະຫຍາຍຕົວ ທາງດ້ານປະລິມານ ແລະ ຄຸນນະພາບ, ບັນດາໂຄງການຮ່ວມມືທີ່ສຳຄັນຕ່າງໆ ເປັນຕົ້ນແມ່ນ ທ່າເຮືອວຸງອ່າງ, ເສັ້ນທາງລົດໄຟລາວ-ຈີນ, ເສັ້ນທາງດ່ວນ ແລະ ບັນດາໂຄງການພັດທະນາພື້ນຖານໂຄງລ່າງຕ່າງໆ ພວມນຳເອົາຜົນປະໂຫຍດອັນມະຫາສານມາສູ່ປະຊາຊົນລາວ, ປະກອບສ່ວນສຳຄັນເຂົ້າໃນການສ້າງສາພັດທະນາ ເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃຫ້ນັບມື້ນັບເຕີບໃຫຍ່ເຂັ້ມແຂງ.

**3) ກຸ່ມບໍລິສັດ ເອໄອເອັຟ ຈຳກັດ ມອບຍານພາຫະນະ ໃຫ້ ຄະນະພົວພັນຕ່າງປະເທດສູນກາງພັກ**



ພິທີມອບ-ຮັບ ການຊ່ວຍເຫຼືອຍານພາຫະນະ (ລົດຈັກ) ຈາກ ກຸ່ມບໍລິສັດ ເອໄອເອັຟ ຈຳກັດ (AIF Group) ໃຫ້ແກ່ ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 17 ຕຸລາ 2025, ທີ່ ສຳນັກງານ ຄຕພ, ໂດຍການກ່າວມອບຂອງ ທ່ານ ປອ ລິດທິກອນ ພູມມະສັກ, ປະທານກຸ່ມບໍລິສັດ ເອໄອເອັຟ ຈຳກັດ ແລະ ກ່າວຮັບໂດຍ ທ່ານ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ເຊິ່ງມີ ທ່ານ ນາງ ທິບພະກອນ ຈັນທະວົງສາ ແລະ ທ່ານ ປອ ພວງປາຣິສັກ ປຣະວົງວຽງຄຳ, ຮອງປະທານອາວຸໂສ ກຸ່ມບໍລິສັດ ເອໄອເອັຟ ຈຳກັດ; ບັນດາຄະນະກົມ ຈາກ ຄຕພ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຈາກທັງສອງພາກສ່ວນ ເຂົ້າຮ່ວມເປັນສັກຂີພະຍານ. ການຊ່ວຍເຫຼືອຄັ້ງປະກອບມີ ລົດຈັກ ຮອນດ້າເວບ ຈຳນວນ 10 ຄັນ ພ້ອມດ້ວຍໝວກກັນນັອກ ແລະ ເສື້ອກັນລົມ, ມູນຄ່າ 322,000,000 ກີບ, ໂດຍຈຸດປະສົງແມ່ນເພື່ອປະກອບສ່ວນຊຸກຍູ້ການເຄື່ອນໄຫວວຽກງານຂອງ ຄຕພ ໃຫ້ມີຄວາມສະດວກກວ່າເກົ່າ.

ໃນໂອກາດນີ້, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການເຄື່ອນໄຫວວຽກງານ ແລະ ການປະກອບສ່ວນຊ່ວຍເຫຼືອສັງຄົມໃນໄລຍະຜ່ານມາຂອງ ກຸ່ມບໍລິສັດດັ່ງກ່າວ ແລະ ໄດ້ຕາງໜ້າໃຫ້ຄະນະພັກ-ຄະນະນຳ ແລະ ພະນັກງານຂອງ ຄຕພ ທັງໝົດ ສະແດງຄວາມຂອບໃຈຢ່າງສູງຕໍ່ ທ່ານ ປອ ລິດທິກອນ ພູມມະສັກ, ປະທານກຸ່ມບໍລິສັດ ເອໄອເອັຟ ຈຳກັດ ທີ່ມີນ້ຳໃຈເອື້ອເຟື້ອເຜື່ອແຜ່ໃຫ້ການສະໜັບສະໜູນຊ່ວຍເຫຼືອແກ່ ຄຕພ ໃນຄັ້ງນີ້ ເຊິ່ງເປັນການສະແດງເຖິງການຮັບຮູ້ຄວາມສຳຄັນຂອງບົດບາດ ແລະ ໜ້າທີ່ ຂອງ ຄຕພ ໃນຖານະເປັນເສນາທິການໃຫ້ແກ່

ສູນກາງພັກ ທາງດ້ານວຽກງານຕ່າງປະເທດ ແລະ ໄດ້ເນັ້ນວ່າ ຈະຄຸ້ມຄອງ ແລະ ນຳໃຊ້ພາຫະນະດັ່ງກ່າວເຂົ້າໃນການເຄື່ອນໄຫວວຽກງານຂອງ ຄຕພ ໃຫ້ເກີດປະໂຫຍດສູງສຸດ. ພ້ອມດຽວກັນນີ້, ກໍໄດ້ອວຍພອນໃຫ້ ທ່ານ ປອ ລິດ ທິກອນ ພູມມະສັກ ພ້ອມດ້ວຍຄະນະ ຈົ່ງມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານຂອງຕົນທຸກປະການ, ພ້ອມທັງ ອວຍພອນໃຫ້ ກຸ່ມບໍລິສັດດັ່ງກ່າວ ດຳເນີນທຸລະກິດດ້ວຍຜົນສຳເລັດ ແລະ ເຕີບໃຫຍ່ຂະຫຍາຍຕົວຍິ່ງໆຂຶ້ນໄປ.

ກຸ່ມບໍລິສັດ AIF ເປັນກຸ່ມບໍລິສັດໜຶ່ງ ທີ່ມີຄວາມອາດສາມາດສູງ ແລະ ດຳເນີນທຸລະກິດດ້ວຍສະພາບຄ່ອງມາໂດຍຕະຫຼອດ, ປະຈຸບັນ ມີບໍລິສັດໃນເຄືອ ຫຼາຍກວ່າ 35 ບໍລິສັດ ທີ່ດຳເນີນທຸລະກິດ ກວມເອົາຫຼາຍຂະແໜງການ ທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ: ການເງິນ-ການທະນາຄານ, ການກໍ່ສ້າງພື້ນຖານໂຄງລ່າງ, ການບໍລິການ, ການຄ້າ, ກະສິກຳ, ອະສັງຫາລິມະຊັບ, ການຂົນສົ່ງ, ພະລັງງານ, ໂທລະຄົມ, ໄອທີ ແລະ ການພັດທະນາຊັອບແວ (Software) ແລະ ໄດ້ຮ່ວມຮັບໃຊ້ ບັນດາວຽກງານທັນເປັນທັນສະໄໝ ໃຫ້ແກ່ພາກລັດໃນຫຼາຍຂະແໜງການ.

**4) ຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສະພາວັດທະນະທຳອາຊີ ຄັ້ງທີ IV ໃນຂອບອົງການກອງປະຊຸມສາກົນຂອງບັນດາພັກການເມືອງໃນອາຊີ (ICAPP), ທີ່ ນະຄອນຫຼວງບາກູ, ສ. ອາແຊັກໄບຊານ**




ໃນວັນທີ 16-19 ຕຸລາ 2025, ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນຳໂດຍ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເດີນທາງເຂົ້າຮ່ວມກອງປະຊຸມສະພາວັດທະນະທຳອາຊີ ຄັ້ງທີ IV ໃນຂອບອົງການກອງປະຊຸມສາກົນຂອງບັນດາພັກການເມືອງໃນອາຊີ (The 4th Meeting of ICAPP Asian Cultural Council) ພາຍໃຕ້ຫົວຂໍ້ "ຈາກຄວາມຫຼາກຫຼາຍຂອງບັນດາຊາດ ສູ່ ຄວາມສາມັກຄີຂອງປະຊາຄົມໂລກ: ບົດບາດຂອງວັດທະນະທຳໃນລະບຽບໂລກໃໝ່" (From National Diversity to Global Solidarity: The Role of Culture in the New World Order) ໂດຍການເປັນເຈົ້າພາບຂອງພັກອາແຊັກໄບຊານໃໝ່, ຊຶ່ງມີຄະນະຜູ້ແທນເຂົ້າຮ່ວມທັງໝົດ 16 ພັກການເມືອງ ຈາກ 14 ປະເທດໃນຂົງເຂດອາຊີ, ຕາເວັນອອກກາງ ແລະ ເອີຣົບ.

ກອງປະຊຸມສະພາວັດທະນະທຳອາຊີ ແມ່ນກົນໄກໜຶ່ງ ຂອງອົງການໄອແຄັບ (ICAPP) ທີ່ໄດ້ເຕົ້າໂຮມເອົາບັນດາພັກການເມືອງສະມາຊິກ ເພື່ອຄົ້ນຄວ້າ, ແລກປ່ຽນ ແລະ ປຶກສາຫາລືກັນ ກ່ຽວກັບ ການແລກປ່ຽນວັດທະນະທຳ ແລະ ການຮ່ວມມື ເພື່ອເພີ່ມທະວີຄວາມເຂົ້າໃຈ ແລະ ຄວາມສາມັກຄີກັນ ລະຫວ່າງ ປະຊາຊົນໃນອາຊີ ກໍຄື ໃນໂລກ. ກອງປະຊຸມຄັ້ງນີ້, ຍັງມີເປົ້າໝາຍເພື່ອກຳນົດ ແລະ ສົ່ງເສີມຍຸດທະສາດທີ່ເປັນຮູບປະທຳ ເພື່ອນຳໃຊ້ວັດທະນະທຳເປັນຊັບພະຍາກອນ ເພື່ອການພັດທະນາທີ່ຍືນຍົງ.

ໃນໂອກາດດັ່ງກ່າວ, ຫົວໜ້າຄະນະຜູ້ແທນ ພັກ ປປ ລາວ ໄດ້ປະກອບຄຳເຫັນ ໂດຍໄດ້ສະແດງຄວາມຊົມເຊີຍ ແລະ ໄດ້ຕີລາຄາສູງຕໍ່ອົງການໄອແຄັບ ທີ່ໄດ້ຈັດກອງປະຊຸມຄັ້ງນີ້ ຊຶ່ງຖືເປັນເວທີທີ່ມີຄວາມໝາຍ-ຄວາມສຳຄັນຢ່າງຍິ່ງ ທັງເປັນການຊຸກຍູ້ການຮ່ວມມື ແລະ ສົ່ງເສີມການສະແດງອອກເຖິງຄວາມຫຼາກຫຼາຍທາງດ້ານວັດທະນະທຳ ແລະ ການອະນຸລັກມໍລະດົກ. ພັກ ປປ ລາວ ໄດ້ໃຫ້ຄວາມສຳຄັນຢ່າງຍິ່ງ ໃນການເສີມຂະຫຍາຍຄຸນຄ່າວັດທະນະ

ທຳທີ່ເປັນເອກະລັກຂອງຊາດ, ໃຫ້ວັດທະນະທຳມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ; ຖືເອົາວັດທະນະທຳ ແລະ ສິລະປະ ເປັນຮາກຖານຂອງຄວາມຍືນຍົງແຫ່ງຊາດ. ພ້ອມນັ້ນ, ກໍຍິນດີໃຫ້ການສະໜັບສະໜູນ ແລະ ຕັ້ງໜ້າປະກອບສ່ວນເຂົ້າໃນການຮ່ວມມືຂອງອົງການດັ່ງກ່າວ ກໍຄື ໃນຂອບວຽກຂອງສະພາວັດທະນະທຳອາຊີ ເພື່ອສົ່ງເສີມ ແລະ ພັດທະນາກົນໄກທີ່ມີປະສິດທິພາບໃນການຮ່ວມມືທາງດ້ານວັດທະນະນຳ ເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາແບບຍືນຍົງ. ຄຽງຄູ່ກັນນັ້ນ, ຄະນະຜູ້ແທນພັກ ປປ ລາວ ກໍຍັງໄດ້ເຂົ້າຮ່ວມສັງເກດການກອງປະຊຸມຄະນະປະຈຳໄອແຄັບ ຄັ້ງທີ 44 ທີ່ຈັດຂຶ້ນຄູ່ຂະໜານກັນ ຊຶ່ງຖືເປັນການເຂົ້າຮ່ວມເພື່ອສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງ ຕໍ່ວິໄສທັດ ແລະ ແຜນງານ ຂອງອົງການໄອແຄັບ ເພື່ອການປະກອບສ່ວນຢ່າງຕັ້ງໜ້າຂອງພັກ ປປ ລາວ ເຂົ້າໃນການເຄື່ອນໄຫວຕ່າງໆຂອງອົງການ ໃນຕໍ່ໜ້າ.

**5) ຮອງຫົວໜ້າ ຄຕພ ເຂົ້າຢ້ຽມຂໍ່ານັບການນຳຂັ້ນສູງຂອງ ພັກອາແຊັກໄບຊານໃໝ່**



ໃນວັນທີ 18 ຕຸລາ 2025, ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວຫນ້າຄະນະພົວພັນຕ່າງປະເທດສູນກາງພັກ, ໄດ້ນຳພາຄະນະ ເຂົ້າພົບຢ້ຽມຂໍ່ານັບ ສະຫາຍ ຕາຄີຣ ບູດາກົບ (Tahir BUDAGOV), ຮອງປະທານພັກອາແຊັກໄບຊານໃໝ່ (New Azerbaijan Party), ໃນໂອກາດເຂົ້າຮ່ວມກອງປະຊຸມຂອງອົງການກອງປະຊຸມສາກົນຂອງບັນດາພັກການເມືອງໃນອາຊີ (The International Conference of Asian Political Parties – ICAPP) ທີ່ ນະຄອນຫຼວງບາກູ, ສ. ອາແຊັກໄບຊານ. ໃນໂອກາດດັ່ງກ່າວ, ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງ ພັກອາແຊັກໄບຊານໃໝ່ ແລະ ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດໃນການເປັນເຈົ້າພາບຈັດກອງປະຊຸມສະພາວັດທະນະທຳອາຊີ ຄັ້ງທີ IV ຂອງອົງການ ICAPP ພ້ອມນຳເອົາຄວາມຢື້ຢາມຖາມຂ່າວຈາກການນຳຂັ້ນສູງຂອງພັກ ປປ ລາວ ເຖິງການນຳຂັ້ນສູງຂອງ ພັກອາແຊັກໄບຊານໃໝ່. ພ້ອມນັ້ນ, ຍັງໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ສອງປະເທດ ທີ່ມີມາແຕ່ສະໄໝອະດີດສະຫະພາບໂຊວຽດ ໂດຍສະເພາະ ການຊ່ວຍສ້າງຊັບພະຍາກອນມະນຸດໃຫ້ແກ່ ສປປ ລາວ ຊຶ່ງກາຍເປັນປັດໄຈພື້ນຖານສຳຄັນຕໍ່ການພົວພັນ ລະຫວ່າງ ສປປ ລາວ ແລະ ສ. ອາແຊັກໄບຊານ ກໍຄື ການສະໜັບສະໜູນເຊິ່ງກັນແລະກັນ ທັງໃນຂອບການຮ່ວມມືລະດັບພາກພື້ນ ແລະ ສາກົນ. ນອກນັ້ນ, ຍັງໄດ້ແຈ້ງໃຫ້ຊາບ ກ່ຽວກັບ ຈຸດພິເສດທາງດ້ານພູມສັນຖານ ແລະ ສະພາບການພົ້ນເດັ່ນຂອງ ສປປ ລາວ ເປັນຕົ້ນແມ່ນ ການພັດທະນາເສດຖະກິດ-ສັງຄົມ, ການສະເຫຼີມສະຫຼອງ 3 ວັນປະຫວັດສາດ ໃນປີ 2025 ນີ້ ແລະ ການກະກຽມຈັດກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃນຕົ້ນປີ 2026.

**6) ຄະນະຜູ້ແທນສະມາຄົມມິດຕະພາບ ກຳປູເຈຍ - ລາວ ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ**




ໃນວັນທີ 2 ຕຸລາ 2025, ໄດ້ມີກອງປະຊຸມພົບປະລະຫວ່າງ ສະມາຄົມມິດຕະພາບ ລາວ-ກຳປູເຈຍ ແລະ ກຳປູເຈຍ-ລາວ. ຝ່າຍລາວ ນຳໂດຍ ທ່ານ ຄຳໃບ ດຳລັດ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກຳປູເຈຍ; ຝ່າຍກຳປູເຈຍ ນຳໂດຍ ທ່ານ ພົນເອກ ນຽງ ພາດ, ປະທານສະມາຄົມມິດຕະພາບ ກຳປູເຈຍ-ລາວ. ໃນກອງປະຊຸມສອງຝ່າຍ ໄດ້ທົບທວນຕີລາຄາຄືນການພົວພັນຮ່ວມມື ແລະ ການເຄື່ອນໄຫວສ້າງກິດຈະກຳຮ່ວມກັນໃນໄລຍະຜ່ານມາ ແລະ ປຶກສາຫາລືແຜນການຮ່ວມມືໃນຕໍ່ໜ້າ. ພ້ອມນັ້ນ, ສອງຝ່າຍ ຍັງປຶກສາຫາລືຄົ້ນຄວ້າການພົວພັນຮ່ວມມືໃນການສ້າງການຄ້າຊາຍແດນລະຫວ່າງ ລາວ ແລະ ກຳປູເຈຍ. ສອງຝ່າຍເຫັນດີຈະສືບຕໍ່ກົນໄກປະສານງານ, ແລກປ່ຽນ ແລະ ສ້າງກິດຈະກຳຮ່ວມກັນ ເພື່ອປະກອບສ່ວນເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືຮອບດ້ານໝັ້ນຄົງຍາວນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ - ກຳປູເຈຍ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ກ້າວເຂົ້າສູ່ລະດັບໃໝ່.

ໃນວັນດຽວກັນ, ຄະນະຜູ້ແທນສະມາຄົມມິດຕະພາບ ກຳປູເຈຍ - ລາວ ໄດ້ເຂົ້າຢ້ຽມຂໍ່ານັບ ທ່ານ ພົນໂທ ຄຳລຽງ ອຸທະໄກສອນ, ກຳມະການສູນກາງພັກ, ລັດຖະມົນຕີກະຊວງປ້ອງກັນປະເທດ. ທ່ານ ພົນໂທ ຄຳລຽງ ອຸທະໄກສອນ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການຢ້ຽມຢາມຂອງຄະນະຜູ້ແທນ ຖືເປັນການປະກອບສ່ວນເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືຮອບດ້ານໝັ້ນຄົງຍາວນານ ລາວ - ກຳປູເຈຍ. ພ້ອມນັ້ນ, ຍັງໄດ້ສະແດງຄວາມຊົມເຊີຍຕໍ່ການເຄື່ອນໄຫວ ຂອງ ສະມາຄົມມິດຕະພາບ ກຳປູເຈຍ-ລາວ ທີ່ໄດ້ສົມທົບກັບຄູ່ຮ່ວມມື ຂອງລາວ ເຄື່ອນໄຫວຮ່ວມກັນ ຊຸກຍູ້, ສົ່ງເສີມ ແລະ ສະໜັບສະໜູນການພົວພັນຮ່ວມມື ແລະ ໄປມາຫາສູ່, ພົບປະແລກປ່ຽນ, ສ້າງກິດຈະກຳ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນລະຫວ່າງປະຊາຊົນໂດຍສະເພາະແມ່ນປະຊາຊົນຕາມເຂດຊາຍແດນເຮັດໃຫ້ຊາຍແດນເປັນຊາຍແດນມິດຕະພາບ, ສັນຕິພາບ ແລະ ການຮ່ວມມືເພື່ອການພັດທະນາ.

**7) ພິທີປະກາດຊື່ ໂຮງຮຽນມັດທະຍົມສົມບູນມິດຕະພາບ ລາວ - ສປປ ເກົາຫຼີ ແລະ ປາຖະກະຖາ ວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 80 ປີ (10/10/1945-10/10/2025)**



ໃນຕອນເຊົ້າວັນທີ 09 ຕຸລາ 2025, ສະມາຄົມມິດຕະພາບລາວ-ສປປ ເກົາຫຼີ, ນະຄອນຫຼວງວຽງຈັນ, ໂຮງຮຽນມັດທະຍົມສົມບູນມິດຕະພາບ ລາວ-ສປປ ເກົາຫຼີ ຮ່ວມກັບ ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຈັດພິທີປະກາດຊື່ ໂຮງຮຽນມັດທະຍົມສົມບູນມິດຕະພາບ ລາວ - ສປປ ເກົາຫຼີ ແລະ ປາຖະກະຖາ ວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 80 ປີ (10/10/1945-10/10/2025) ທີ່ ບ້ານນາຄວາຍໃຕ້, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໃຫ້ກຽດເປັນປະທານຮ່ວມໂດຍ ສະຫາຍ ປອ. ອາດສະພັງທອງ ສີພັນດອນ, ກຳມະການສູນກາງພັກ, ປະທານຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ, ປະທານສະມາຄົມມິດຕະພາບ ລາວ - ສປປ ເກົາຫຼີ ແລະ ສະຫາຍ ລີ ຢົງ ຊິນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ.

ໃນໂອກາດດັ່ງກ່າວ ສະຫາຍ ລີ ຢົງ ຊິນ, ໄດ້ຂຶ້ນກ່າວປາຖະກະຖາເຖິງຜົນງານ ແລະ ມູນເຊື້ອແຫ່ງການກໍ່ສ້າງພັກແຮງງານເກົາຫຼີ ອັນມີ ສະຫາຍ ກິມ ອິນ ຊຸງ, ຜູ້ນຳທີ່ຍິ່ງໃຫຍ່, ປະທານປະເທດຕະຫຼອດການ ແຫ່ງ ສປປ ເກົາຫຼີ ແລະ ຜູ້ນຳພາແສງສະຫວ່າງແນວຄິດຈຸດເຊ່ ເປັນແກນນຳໃນພາລະກິດປະຕິວັດຂອງພັກ, ກຳລັງປະກອບອາວຸດ ແລະ ໄດ້ນຳພາປະຊາຊົນ ສປປ ເກົາຫຼີ ເຂົ້າໃນຂະບວນວິວັດແຫ່ງການຕໍ່ສູ້ປົດປ່ອຍຊາດກໍຄືປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີ  ແລະ ສະຫາຍ ກິມ ເຈິງ ອິນ, ຜູ້ນຳທີ່ຍິ່ງໃຫຍ່, ເລຂາທິການໃຫຍ່ພັກແຮງງານເກົາຫຼີຕະຫຼອດການ, ປະທານຄະນະກຳມາທິການປ້ອງກັນຊາດ ແຫ່ງ ສປປ ເກົາຫຼີ ຕະຫຼອດການ ເປັນຜູ້ສືບຕໍ່ນຳພາລະກິດດັ່ງກ່າວ, ໃນປະຈຸບັນພາຍໃຕ້ການນຳພາຂອງ ສະຫາຍ ກິມ ເຈິງ ອຸນ, ຜູ້ນຳທີ່ເຄົາລົບຮັກ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ແຫ່ງ ສປປ ເກົາຫຼີ, ຜູ້ບັນຊາການສູງສຸດກຳລັງປະກອບອາວຸດ ແຫ່ງ ສປປ ເກົາຫຼີ ອັນໄດ້ເຮັດໃຫ້ ສປປ ເກົາຫຼີ ມີການພັດທະນາຮອບດ້ານ, ການເມືອງມີສະຖຽນລະພາບໜັກແໜ້ນ, ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງທັນສະໄໝ, ເສດຖະກິດມີການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນ ສປປ ເກົາຫຼີ ໄດ້ຮັບການປັບປຸງດີຂຶ້ນຢ່າງບໍ່ຢຸດຢັ້ງ, ເຊິ່ງເຮັດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ເຖິງສະພາບ ການຕົວຈິງ ໃນການພັດທະນາກໍ່ຄືຜົນສຳເລັດອັນໃຫຍ່ຫຼວງທີ່ປະຊາຊົນ ສປປ ເກົາຫຼີ ຍາດມາໄດ້; ທັງໄດ້ຍົກໃຫ້ເຫັນເຖິງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ສປປ ເກົາຫຼີໃນໄລຍະຜ່ານມາ.

ໃນພິທີດັ່ງກ່າວ ໄດ້ມີການປະກາດຊື່ໂຮງຮຽນມັດທະຍົມສົມບູນມິດຕະພາບ ລາວ-ສປປ ເກົາຫຼີ ຢ່າງເປັນທາງການ, ເຊິ່ງສະຫາຍ ປອ. ອາດສະພັງທອງ ສີພັນດອນ ໄດ້ກ່າວວ່າ ໂຮງຮຽນດັ່ງກ່າວ ແມ່ນເປັນສັນຍາລັກແຫ່ງການພົວພັນຮ່ວມມືລະຫວ່າງ ສະມາຄົມມິດຕະພາບ ລາວ-ສປປ ເກົາຫຼີ ແລະ ສປປ ເກົາຫຼີ-ລາວ ກໍຄືສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ສປປ ເກົາຫຼີ ທີ່ໄດ້ສ້າງຕັ້ງຂຶ້ນບົນພື້ນຖານໄມຕີຈິດມິດຕະພາບ ແລະ ການຮ່ວມມື ເພື່ອປະຕິບັດພາລະກິດສັງຄົມນິຍົມ  ແລະ ເຊື່ອໝັ້ນວ່າໂຮງຮຽນແຫ່ງນີ້ ຈະໄດ້ຮັບການປັບປຸງໃຫ້ເປັນໂຮງຮຽນທີ່ທັນສະໄໝຢ່າງຮອບດ້ານໃນອະນາຄົດ.

**8) ສະມາຄົມ ລາວ-ໄທ ແລະ ໄທ-ລາວ ເພື່ອມິດຕະພາບ ຈັດກອງປະຊຸມຮ່ວມປະຈຳປີ ແລະ ທອດຖວາຍຜ້າກະຖິນພຣະຣາຊະທານຂອງເຈົ້າຊີວິດແຫ່ງຣາຊະອານາຈັກໄທ ທີ່ແຂວງສະຫວັນນະເຂດ**




ວັນທີ 18 ຕຸລາ 2025, ທີ່ແຂວງສະຫວັນນະເຂດ ສະມາຄົມ ລາວ-ໄທ ເພື່ອມິດຕະພາບ ແລະ ສະມາຄົມ ໄທ-ລາວ ເພື່ອມິດຕະພາບ ໄດ້ຈັດກອງປະຊຸມຮ່ວມປະຈຳປີ ໂດຍການເປັນປະທານຮ່ວມຂອງທ່ານ ຫຼີ ບຸນຄໍ້າ, ປະທານສະມາຄົມ ລາວ-ໄທ ເພື່ອມິດຕະພາບ ແລະ ທ່ານ ກຽດຕິຄຸນ ຊາດປະເສີດ, ປະທານສະມາຄົມ ໄທ-ລາວ ເພື່ອມິດຕະພາບ. ໃຫ້ກຽດເຂົ້າຮ່ວມເປັນແຂກກິຕິມະສັກ ຂອງ ທ່ານ ໂພໄຊ ໄຂຄໍາພິທູນ, ຮອງເຈົ້າແຂວງ ແຂວງສະຫວັນນະເຂດ. ພ້ອມນັ້ນຍັງມີ ຄະນະບໍລິຫານງານສະມາຄົມ ລາວ-ໄທ ແລະ ໄທ-ລາວ ເພື່ອມິດຕະພາບ ແລະ ແຂກທີ່ມີກຽດຈາກພາກສ່ວນກ່ຽວຂ້ອງຂອງສອງຝ່າຍເຂົ້າຮ່ວມ. ກອງປະຊຸມ ໄດ້ທົບທວນຄືນການພົວພັນຮ່ວມມື ແລະ ເຄື່ອນໄຫວສ້າງກິດຈະກໍາຮ່ວມກັນໃນໄລຍະຜ່ານມາ ແລະ ປຶກສາຫາລືແຜນການຮ່ວມມື ແລະ ເຄື່ອນໄຫວກິດຈະກໍາຮ່ວມກັນໃນຕໍ່ໜ້າ ເພື່ອເຮັດໃຫ້ການເຄື່ອນໄຫວຮ່ວມມື ຂອງສອງສະມາຄົມພວກເຮົາ ໃຫ້ນັບມື້ມີບາດກ້າວໃໝ່, ມີປະສິທິພາບ ແລະ ປະສິດທິຜົນ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍ ແລະ ພັດທະນາສາຍພົວພັນ ແລະ ການຮ່ວມມື ຖານບ້ານໃຫ້ເຮືອນຄຽງກໍ່ຄືການເປັນຄູ່ຮ່ວມຍຸດທະສາດເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງ ລະຫວ່າງ ສອງປະເທດ ແລະ ປະຊາຊົນສອງຊາດ. ກອງປະຊຸມ ມີຄວາມພາກພູມໃຈ ທີ່ເຫັນວ່າສະມາຄົມລາວ-ໄທ ເພື່ອມິດຕະພາບ ແລະ ສະມາຄົມ ໄທ-ລາວ ເພື່ອມິດຕະພາບ ໄດ້ຮັບການສ້າງຕັ້ງຂຶ້ນໃນ ວັນທີ 29 ມິຖຸນາ ປີ 1993 ເຊິ່ງມາຮອດປີນີ້ແມ່ນຄົບຮອບ 32 ປີ, ຕະຫລອດໄລຍະເວລາ 32 ປີ ທີ່ຜ່ານມາ ການຮ່ວມມື ຂອງສອງສະມາຄົມໄດ້ດໍາເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບທີ່ດີ ແລະ ມີການພັດທະນາຢ່າງຕໍ່ເນື່ອງໃນຫຼາຍດ້ານ ທັງພາກລັດ, ພາກເອກະຊົນ ຫມາຍວ່າໄດ້ເຮັດຫນ້າທີ່ວຽກງານການທູດປະຊາຊົນໄດ້ດີ, ເຊິ່ງເຫັນວ່າ ລັດຖະບານ ແລະ ປະຊາຊົນຂອງທັງສອງປະເທດມີຄວາມເຂົ້າອົກເຂົ້າໃຈກັນດີ, ເຊິ່ງສອງສະມາຄົມໄດ້ຈັດກິດຈະກໍາ ຮ່ວມກັນຢ່າງຕໍ່ເນື່ອງ ເຊັ່ນ: ການທອດຖວາຍຜ້າກະຖິນພຣະຣາຊະທານຢູ່ລາວ ຈໍານວນ 24 ຄັ້ງ ແລະ ການທອດຖວາຍຜ້າປ່າສາມັກຄີຢູ່ໄທ ຈານວນ 04 ຄັ້ງ.

ໃນວັນທີ 19 ຕຸລາ 2025, ສະມາຄົມ ລາວ-ໄທ ແລະ ໄທ-ລາວ ເພື່ອມິດຕະພາບ ໄດ້ຮ່ວມກັນນໍາເອົາກອງຜ້າກະຖິນພຣະຣາຊະທານຂອງເຈົ້າຊີວິດແຫ່ງຣາຊະອານາຈັກໄທ ໄປທອດຖວາຍຢູ່ວັດສຸມັນທາຣາມ, ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ. ໃຫ້ກຽດຮັບກອງກະຖິນໂດຍ ພຣະອາຈານ ວົງສິນ ຣັດຕະນະພອນ, ເຈົ້າອະທິການວັດ ສຸມັນທາຣາມ.

ການຈັດກິດຈະກໍາທອດຖະກິນ ແລະ ທອດຜ້າປ່າສາມັກຄີ ແມ່ນກິດຈະກໍາປະຈໍາປີ ຂອງສອງສະມາຄົມ ລາວ-ໄທ ແລະ ໄທ-ລາວ ເພື່ອມິດຕະພາບ ທີ່ເຄີຍປະຕິບັດຮ່ວມກັນເປັນປົກກະຕິ, ເຊິ່ງຄັ້ງນີ້ ເປັນການການທອດຖວາຍກະຖິນພະຣາຊະທານຂອງເຈົ້າຊີວິດແຫ່ງຣາຊະອານາຈັກໄທ ແມ່ນຄັ້ງທີ່ 25 (ຜ້າກະຖິນຂອງເຈົ້າຊີວິດແຫ່ງຣາຊະອານາຈັກໄທຣາຊະການທີ IX ຈໍານວນ 19 ຄັ້ງ ແລະ ຣາຊະການທີ X ຈໍານວນ 6 ຄັ້ງ). ກິດຈະກໍາທອດກະຖິນ ແລະ ທອດຜ້າປ່າແມ່ນເພື່ອສົ່ງເສີມ ແລະ ອະນຸລັກວັດທະນະທໍາ, ຮີດຄອງປະເພນີອັນດີງາມ ຂອງ ປະຊາຊົນລາວ ແລະ ໄທ ເປັນການສົ່ງເສີມໃຫ້ມີການໄປມາຫາສູ່ເຊິ່ງກັນ ແລະ ກັນ ຂອງປະຊາຊົນລາວ ແລະ ໄທ, ທັງເປັນການປະກອບສ່ວນສໍາຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມ ລະຫວ່າງ ສອງປະເທດ ແລະ ປະຊາຊົນສອງຊາດລາວ ແລະ ໄທ.